# 09 ການສັນຈອນ ຜ່ານທາງລົດໄຟ

## ການສັນຈອນຜ່ານທາງລົດໄຟ

- ຂ້າມທາງລົດໄຟໃນບ່ອນທີ່ໄດ້ກຳນົດໃຫ້ ເທົ່ານັ້ນ
- ປ່ອຍທາງໃຫ້ບູລິມະສິດແກ່ຂະບວນລົດໄຟ ຫຼື ຫົວຈັກລົດໄຟ ທີ່ກຳລັງແລ່ນໃກ້ເຂົ້າມາ ໄປກ່ອນ
- ປະຕິບັດຕາມ ປ້າຍສັນຍານ, ໄຟສັນຍານ, ເຄື່ອງໝາຍທາງ, ຕຳແໜ່ງໄມ້ກັ້ນທາງ ແລະ ການຊີ້ບອກຂອງຄົນ ເຝົ້າຍາມທາງລົດໄຟ ແລະ ຕ້ອງໃຫ້ແນ່ໃຈວ່າ ບໍ່ມີຂະບວນລົດໄຟແລ່ນມາໃນ ໄລຍະໃກ້



## ບໍ່ອະນຸຍາດໃຫ້ຂັບຂີ່ຂ້າມທາງລົດໄຟ ເວລາ ທີ່:

- ມີໄມ້ກັ້ນທາງ ຫຼື ໄມ້ກັ້ນທາງກຳລັງຖືງລົງ
- ມີໄຟສັນຍານຫ້າມຜ່ານ
- ຄົນເຝົ້າຍາມລົດໄຟໃຫ້ສັນຍານຫ້າມຜ່ານ
- ເມື່ອເຫັນວ່າມີອຸປະສັກຈະຂ້າມທາງບໍ່ຫວິດ
- ຂັບລົດແຊງລົດທີ່ຈອດຢູ່ຕໍ່ໜ້າທາງຂ້າມທາງລົດໄຟ
- ເປີດໄມ້ກັ້ນທາງໂດຍບໍ່ໄດ້ຮັບອະນຸຍາດ
- ຍານພາຫະນະ ຫຼື ກົນຈັກໜັກ ທີ່ແລ່ນດ້ວຍຄວາມໄວຕໍ່າກວ່າ 8 km/h ແລະ ຂ້າມທາງລົດໄຟໂດຍບໍ່ໄດ້ຮັບ ອະນຸຍາດຈາກຄົນເຝົ້າຍາມ



## ການຢຸດລົດຢູ່ບ່ອນຂ້າມທາງລົດໄຟ

ຜູ້ຂັບຂີ່ ຕ້ອງຢຸດຢູ່ຕໍ່ໜ້າເສັ້ນຢຸດ, ປ້າຍຢຸດ ຫຼື ໄຟສັນຍານ, ຖ້າບໍ່ມີ ຕ້ອງຢູ່ຫ່າງຈາກໄມ້ກັ້ນທາງ ບໍ່ໃຫ້ຫຼຸດ 5 m ແລະ ຖ້າ ບໍ່ມີ ໃຫ້ຢຸດຫ່າງຈາກລາງລົດໄຟບໍ່ຕໍ່າກວ່າ 10 m



## ລົດຕິດຂັດຢູ່ທາງລົດໄຟ

ກໍລະນີເກີດເຫດສຸກເສີນ ລົດດັບຂະນະທີ່ຂ້າມທາງລົດໄຟ ສິ່ງທີ່ຕ້ອງເຮັດທໍາອິດແມ່ນ ຜູ້ຂັບຂີ່ ແລະ ທຸກຄົນຕ້ອງລົງຈາກລົດໄວທີ່ສຸດ. ຕິດຕໍ່ແຈ້ງເຈົ້າໜ້າທີ່ເພື່ອຂໍຄວາມຊ່ວຍເຫຼືອ. ກໍລະນີທີ່ລົດໄຟກໍາລັງແລ່ນມາຮອດບໍລິເວນຈຸດຕັດທາງລົດໄຟ ຕ້ອງຮີບອອກຈາກບ່ອນ ເກີດເຫດທີ່ໃຫ້ໄວທີ່ສຸດ ຈົນຢູ່ໃນໄລຍະປອດໄພ ຫຼື ຫາບ່ອນກໍາບັງ.



## ສັງເກດຂະບວນລົດໄຟ

- ໃຫ້ສັງເກດເບິ່ງວ່າບໍ່ມີຂະບວນລົດໄຟທີ່ກໍາລັງແລ່ນໃກ້ເຂົ້າມາ ຄວນຢຸດກ່ອນ : ມີປ້າຍຢຸດ
- ມີປະຕູ ຫຼື ໄມ້ກັ້ນທາງ
- ໄຟສັນຍານສີແດງຮຸ່ງຂຶ້ນ
- ປ້າຍສັນຍານເຕືອນຂອງພະນັກງານສັ່ງໃຫ້ຢຸດ

